# ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ
# ຕ້ອນຮັບການເຂົ້າອວຍພອນຂອງບັນດາຄະນະກົມຄະນະທະນາຄານຕ່າງໆ



ໃນວັນທີ 28 ທັນວາ ຜ່ານມານີ້ ທ່ານ ສົມພາວ ໄຟສິດ ເລຂາຄະນະພັກ-ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມຄະນະ ໄດ້ໃຫ້ກຽດຕ້ອນຮັບບັນດາພະນັກງານຂັ້ນນຳຂອງກົມ-ຂອງທະນາຄານທຸລະກິດ ແລະ ບັນດາບໍລິສັດ-ລັດວິສາຫະກິດທີ່ເຂົ້າອວຍພອນເນື່ອງໃນວັນສົ່ງທ້າຍປີເກົ່າ-ຕ້ອນຮັບປີໃໝ່ ຄ.ສ 2012 ດ້ວຍຄວາມອົບອຸ່ນ ເຊິ່ງມີຂຶ້ນຢູ່ຫ້ອງຮັບແຂກທະນາຄານແຫ່ງ ສປປ ລາວ.

ໃນການເຂົ້າອວຍພອນໃນວັນນັ້ນ ເຊິ່ງປະກອບມີຄະນະນຳຂອງບັນດາກົມທີ່ຂຶ້ນກັບທະນາຄານແຫ່ງ ສປປ ລາວ, ຄະນະນຳທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານນະໂຍບາຍ, ທະນາຄານສົ່ງເສີມກະສິກຳ, ທະນາຄານພັດທະນາລາວ, ທະນາຄານຮ່ວມທຸລະກິດລາວ-ຫວຽດ, ທະນາຄານຝຣັ່ງ, ທະນາຄານກຸງເທບ, ທະນາຄານເອຊີລີດາ, ທະນາຄານເອສທີ, ທະນາຄານຮ່ວມພັດທະນາ, ທະນາຄານຮຸ້ນສ່ວນການຄ້າທະຫານຫວຽດນາມສາຂາລາວ, ທະນາຄານການຄ້າສາກົນ, ທະນາຄານອິນດູຈີນ, ທະນາຄານພາບລິກ, ທະນາຄານບູຢອງ, ທະນາຄານພົງສະຫວັນ, ທະນາຄານທຸລະກິດສາຂາ

ຕ່າງປະເທດໄທ, ທະນາຄານ ICBC, ທະນາຄານ GTSI, ຕະຫຼາດຫຼັກຊັບລາວ, ທະນາຄານ ANZ, ທະນາຄານຊາຄອມ, ທູດເສດຖະກິດການຄ້າຈີນປະຈຳລາວ, ບໍລິສັດປະກັນໄພລາວ-ຫວຽດນາມທະນາຄານ-ບໍລິສັດຕ່າງໆຈຳນວນໜຶ່ງ.

ໃນໂອກາດດັ່ງກ່າວບັນດາຄະນະກົມ-ຄະນະອຳນວຍການຕ່າງໆກໍໄດ້ແຈ້ງສະພາບການເຄື່ອນໄຫວດຳເນີນທຸລະກິດໃຫ້ທ່ານຜູ້ວ່າການຊາບ ພ້ອມນັ້ນກໍໄດ້ອວຍພອນໃຫ້ການນຳຂັ້ນສູງຂອງທະນາຄານຈົ່ງມີແຕ່ອາຍຸຍືນຍາວ ແລະ ໃນຂະນະດຽວກັນ ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍໄດ້ອວຍພອນໄຊອັນປະເສີດມາຍັງຜູ້ນຳພັກ-ລັດ, ບັນດາຄະນະກົມ-ຄະນະອຳນວຍການທະນາຄານຕ່າງໆ ຈົ່ງມີອາຍຸຍືນຍາວສືບຕໍ່ຊີ້ນຳ-ນຳພາ ແລະ ເຮັດໜ້າທີ່ຕາມທີ່ພັກ ແລະ ປະເທດຊາດມອບໝາຍໃຫ້.